ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ......110......./ປປທ

ນະຄອນຫຼວງວຽງຈັນ, ວັນທີ.....19 ສິງຫາ 2022.....

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການປັບປຸງບາງມາດຕາ**

**ຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 53/ສພຊ, ລົງວັນທີ 07 ກໍລະກົດ2022 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ.
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 03/ຄປຈ, ລົງວັນທີ 05 ສິງຫາ 2022.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ປະທານປະເທດ

**ທອງລຸນ ສີສຸລິດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 53 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 07 / 07 / 22

# ມະຕິ
# ຂອງກອງປະຊຸມສະພາແຫ່ງຊາດ
# ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ ໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 6 ກໍລະກົດ 2022 ແລະ ຖືກພິຈາລະນາຮັບຮອງເອົາ ໃນວາລະຕອນບ່າຍຂອງ ຄັ້ງວັນທີ 7 ກໍລະກົດ 2022.

## ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ພອ ໄຊສົມພອນ ພົມວິຫານ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 21 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 7 ກໍລະກົດ 2022

# ກົດໝາຍ
# ວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ
# ນໍ້າ ແລະ ຊັບພະຍາກອນນໍ້າ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກໍານົດເນື້ອໃນການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ ເພື່ອໃຫ້ຈະແຈ້ງ ແລະ ຮັບປະກັນການຈັດຕັ້ງປະຕິບັດວຽກງານນໍ້າ ແລະ ຊັບພະຍາກອນນໍ້າ ໃຫ້ສອດຄ່ອງກັບສະພາບການຕົວຈິງ.

**ມາດຕາ 2 ມາດຕາຂອງກົດໝາຍ ທີ່ມີການປັບປຸງ**

ເນື້ອໃນມາດຕາທີ່ມີການປັບປຸງ ແລະ ເພີ່ມເຂົ້າໃໝ່ ມີ ດັ່ງນີ້:

**1. ມາດຕາ 36 ເປົ້າໝາຍການນໍາໃຊ້ແຫຼ່ງນໍ້າ**

ເປົ້າໝາຍການນໍາໃຊ້ແຫຼ່ງນໍ້າ ມີ ດັ່ງນີ້:

1. ເພື່ອການບໍລິໂພກ ແລະ ອຸປະໂພກ;
2. ເພື່ອການຊົນລະປະທານ, ການຜະລິດກະສິກໍາ ແລະ ປ່າໄມ້, ການລ້ຽງສັດ ແລະ ການປະມົງ;
3. ເພື່ອການຜະລິດພະລັງງານໄຟຟ້າ ແລະ ການຂຸດຄົ້ນບໍ່ແຮ່;
4. ເພື່ອການຜະລິດອຸດສາຫະກໍາ;
5. ເພື່ອການຄົມມະນາຄົມ ແລະ ຂົນສົ່ງ;
6. ເພື່ອການແພດ, ຮັກສາສຸຂະພາບອະນາໄມ;
7. ເພື່ອການພັກຜ່ອນ, ການກິລາ ແລະ ການທ່ອງທ່ຽວ;
8. ເພື່ອການນໍາໃຊ້ເຂົ້າໃນເປົ້າໝາຍອື່ນ.

ແຫຼ່ງນໍ້າໃດໜຶ່ງ ສາມາດນໍາໃຊ້ເຂົ້າໃນເປົ້າໝາຍໜຶ່ງ ຫຼື ຫຼາຍເປົ້າໝາຍ ກໍໄດ້ ດ້ວຍຫຼາຍວິທີການ ເປັນຕົ້ນ ການກັກ, ການດູດ, ການອ່າຍແລວນໍ້າ. ສໍາລັບການນໍາໃຊ້ແຫຼ່ງນໍ້າ ດ້ວຍການອ່າຍແລວນໍ້າທໍາມະຊາດ ຕ້ອງໄດ້ຮັບການອະນຸຍາດ ຕາມກົດໝາຍສະບັບນີ້.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຕ້ອງການນໍາໃຊ້ແຫຼ່ງນໍ້າທີ່ມີການນໍາໃຊ້ນໍ້າຂະໜາດກາງ ແລະ ຂະໜາດໃຫຍ່ ຕ້ອງສໍາຫຼວດ, ກໍານົດແຫຼ່ງນໍ້າທີ່ຈະນໍາໃຊ້ ແລະ ເປົ້າໝາຍການນໍາໃຊ້ແຫຼ່ງນໍ້າ ແລ້ວສະເໜີຕໍ່ຂະແໜງການຊັບ ພະຍາກອນທໍາມະຊາດ ແລະ ສິ່ງ ແວດລ້ອມ ເພື່ອພິຈາລະນາ ຕາມກົດໝາຍ.

**2. ມາດຕາ 36/1 ການອ່າຍແລວນ້ຳ**

ການອ່າຍແລວນ້ຳ ແມ່ນ ການແຍກ, ການຂຸດຄອງ, ການຖົມ, ການດັດແປງ ຫຼື ປ່ຽນແປງເນື້ອທີ່ດິນບໍລິເວນນ້ຳ ຊຶ່ງເຮັດໃຫ້ມີການເພີ່ມ ຫຼື ປ່ຽນແປງທາງໄຫຼຂອງນ້ຳ ໃນສາຍນ້ຳທຳມະຊາດ. ການອ່າຍແລວນ້ຳ ມີ ສອງລັກສະນະ ຄື ລັກສະນະຖາວອນ ແລະ ລັກສະນະຊົ່ວຄາວ ເພື່ອຮັບໃຊ້ກິດຈະການໃດໜຶ່ງ.

ການອ່າຍແລວນ້ຳ ລັກສະນະຖາວອນ ແມ່ນ ການປ່ຽນແປງທາງໄຫຼຂອງນ້ຳ ເພື່ອດຳເນີນກິດຈະການໃດໜຶ່ງ ໂດຍບໍ່ມີການອ່າຍແລວນ້ຳກັບຄືນສູ່ແລວເດີມ ແລະ ຖືວ່າແລວນ້ຳທີ່ສ້າງໃໝ່ນັ້ນ ເປັນແລວນ້ຳທຳມະຊາດ.

ການອ່າຍແລວນ້ຳ ລັກສະນະຊົ່ວຄາວ ແມ່ນ ການປ່ຽນແປງທາງໄຫຼຂອງນ້ຳ ເພື່ອດຳເນີນກິດຈະການໃດໜຶ່ງ ພາຍຫຼັງກິດຈະການດັ່ງກ່າວໄດ້ສິ້ນສຸດແລ້ວ ຈຶ່ງອ່າຍແລວນ້ຳກັບຄືນສູ່ແລວເດີມ ຕາມທຳມະຊາດ.

ການອ່າຍແລວນ້ຳ ຈະດຳເນີນໄດ້ກໍຕໍ່ເມື່ອ ເຫັນວ່າມີຄວາມຈຳເປັນນຳໃຊ້ເຂົ້າໃນເປົ້າໝາຍອື່ນ ເພື່ອຮັບໃຊ້ຜົນປະໂຫຍດສູງສຸດຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ, ຮັບປະກັນ ຄວາມຍຸຕິທຳ ແລະ ສົມເຫດສົມຜົນ ຂອງຜູ້ນຳໃຊ້ນ້ຳ ທີ່ຢູ່ ຕອນລຸ່ມ, ຕອນເທິງ ແລະ ສອງຝັ່ງ ຂອງສາຍນ້ຳ, ຮັກສາຄວາມສົມດຸນທາງດ້ານ ປະລິມານ, ຄຸນນະພາບຂອງນ້ຳ ແລະ ຮັບປະກັນການຮັກສາລະບົບນິເວດ, ມີຜົນກະທົບໜ້ອຍທີ່ສຸດຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ.

ການອ່າຍແລວນ້ຳ ຕ້ອງໄດ້ດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ບົດເຕັກນິກຂອງການອ່າຍແລວນ້ຳສະເພາະ ໂດຍຜ່ານການຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ ແລະ ຕ້ອງຂໍອະນຸຍາດຈາກອົງການລັດທີ່ມີສິດຕົກລົງການອ່າຍແລວນ້ຳ ກ່ອນທີ່ຈະມີການດຳເນີນການອ່າຍແລວນ້ຳ.

ລາຍລະອຽດກ່ຽວກັບການອ່າຍແລວນ້ຳ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**3. ມາດຕາ 36/2 ອົງການລັດທີ່ມີສິດຕົກລົງການອ່າຍແລວນ້ຳ**

ອົງການລັດທີ່ມີສິດຕົກລົງການອ່າຍແລວນ້ຳ ລັກສະນະຖາວອນ ແລະ ລັກສະນະຊົ່ວຄາວ ມີດັ່ງນີ້:

1. ສະພາແຫ່ງຊາດ ຕົກລົງການອ່າຍແລວນ້ຳ ໃນອ່າງຮັບນ້ຳຂະໜາດໃຫຍ່ ຫຼື ມີການຈັດສັນຍົກຍ້າຍປະຊາຊົນ ຫຼາຍກວ່າ ຫ້າຮ້ອຍຄອບຄົວ ຕາມການສະເໜີຂອງລັດຖະບານ;

2. ລັດຖະບານ ຕົກລົງການອ່າຍແລວນ້ຳ ໃນອ່າງຮັບນ້ຳຂະໜາດກາງ ຫຼື ມີການຈັດສັນຍົກຍ້າຍປະຊາຊົນ ໜຶ່ງຮ້ອຍ ຫາ ຫ້າຮ້ອຍຄອບຄົວ ຕາມການສະເໜີ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ບົນພື້ນຖານການປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

3. ສະພາປະຊາຊົນຂັ້ນແຂວງ ຕົກລົງການອ່າຍແລວນ້ຳ ໃນອ່າງຮັບນ້ຳຂະໜາດນ້ອຍ ຫຼື ມີການຈັດສັນຍົກຍ້າຍປະຊາຊົນ ຕ່ຳກວ່າ ໜຶ່ງຮ້ອຍຄອບຄົວ ຕາມການສະເໜີຂອງອົງການປົກຄອງຂັ້ນແຂວງ ບົນພື້ນຖານການຄົ້ນຄວ້າຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍປະສານສົມທົບກັບພະແນກການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ໃນກໍລະນີການອ່າຍແລວນ້ຳໃນອ່າງຮັບນ້ຳໜຶ່ງ ໄປຍັງອີກອ່າງຮັບນ້ຳໜຶ່ງ ຫາກເກີດຂຶ້ນຈາກອ່າງຮັບນ້ຳໃດ ແມ່ນ ໃຫ້ອົງການລັດທີ່ມີສິດຕົກລົງການອ່າຍແລວນ້ຳໃນອ່າງຮັບນ້ຳນັ້ນ ເປັນຜູ້ຕົກລົງການອ່າຍແລວນ້ຳດັ່ງກ່າວ ໂດຍປະສານສົມທົບກັບອົງການລັດທີ່ມີສິດຕົກລົງ ກ່ຽວກັບອ່າງຮັບນ້ຳທີ່ຖືກອ່າຍໄປໃສ່.

ໃນກໍລະນີ ມີການອ່າຍແລວນ້ຳ ອອກຈາກອ່າງນ້ຳຂອງ ແລະ ແມ່ນ້ຳຊາຍແດນລະຫວ່າງປະເທດໄປສູ່ອ່າງຮັບນ້ຳອື່ນ ໃຫ້ປະຕິບັດຕາມສັນຍາວ່າດ້ວຍການຮ່ວມມື ເພື່ອພັດທະນາອ່າງແມ່ນ້ຳຂອງແບບຍືນຍົງ ປີ 1995.

**4. ມາດຕາ 67 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ແຫຼ່ງນ້ຳທຳມະຊາດ, ທີ່ດິນບໍລິເວນນ້ຳ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
2. ຂຸດຄົ້ນ ຫີນແຮ່, ຊາຍ, ຕົມ ແລະ ແຮ່ທາດຕ່າງໆ ໃນແຫຼ່ງນ້ຳ ໂດຍບໍ່ໄດ້ຮັບອະນຸຍາດ;
3. ອວ່າຍແລວນ້ຳ ໂດຍບໍ່ໄດ້ຮັບອະນຸຍາດ;
4. ດຳເນີນກິດຈະກຳ ຢູ່ເຂດບໍລິເວນຕົ້ນກຳເນີດຂອງນ້ຳ, ປ່າປ້ອງກັນ ແລະ ປ່າສະຫງວນ;
5. ປຸກສ້າງສິ່ງໃດ ສິ່ງໜຶ່ງຢູ່ເຂດສະຫງວນຂອງແຫຼ່ງນ້ຳ ສຳລັບການອຸປະໂພກ ແລະ ບໍລິໂພກ ທີ່ຈະສົ່ງຜົນກະທົບໃສ່ຄຸນນະພາບນ້ຳ ເປັນຕົ້ນ ໂຮງໝໍ, ຕະຫຼາດ, ໂຮງງານ, ສະໜາມຂີ້ເຫຍື້ອ, ຟາມລ້ຽງສັດ;
6. ຂຸດ, ເຈາະ, ຖົມ, ກົ່ນ ຫຼື ປັບແປງໜ້າດິນ ທີ່ຈະກໍ່ໃຫ້ເກີດມີການເຊາະເຈື່ອນ ໃນເຂດອ່າງຮັບນ້ຳ, ຖິ້ມ ຫຼື ຖອກເທວັດຖຸສິ່ງຂອງລົງໃນແຫຼ່ງນ້ຳ ຊຶ່ງຈະພາໃຫ້ແຫຼ່ງນ້ຳ ຕື້ນເຂີນ, ບົກແຫ້ງ, ເນົ່າເໝັນ ຫຼື ເປັນພິດ;
7. ປ່ອຍນ້ຳເປື້ອນ, ສານເຄມີທີ່ເປັນພິດ, ທາດກຳມັນຕະພາບລັງສີ, ຖິ້ມລະເບີດ, ຖິ້ມສິ່ງເສດເຫຼືອ ແລະ ຖິ້ມຂີ້ເຫຍື້ອໃສ່ ແຄມນ້ຳ, ແມ່ນ້ຳ, ລຳເຊ, ຕະຄອງຮ່ອງນ້ຳ, ຫ້ວຍ, ໜອງ, ບຶງ ແລະ ທີ່ດິນບໍລິເວນນ້ຳ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 3 ການປ່ຽນແທນເນື້ອໃນບາງມາດຕາຂອງກົດໝາຍ**

ກົດໝາຍສະບັບນີ້ ປ່ຽນແທນເນື້ອໃນມາດຕາ 36 ແລະ ມາດຕາ 67 ຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ສະບັບເລກທີ 23/ສພຊ, ລົງວັນທີ 11 ພຶດສະພາ 2017, ເພີ່ມໃໝ່ ມາດຕາ 36/1 ແລະ ມາດຕາ 36/2.

**ມາດຕາ 4 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 11 ຕຸລາ 2022 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ ປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**